ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
✦✦✦✦✦✦✦✦

ກະຊວງໄປສະນີ,
ໂທລະຄົມມະນາຄົມ ແລະ ການສື່ສານ
ຫ້ອງການ

ເລກທີ 1028 /ປທສ.ຫກ
ນະຄອນຫຼວງວຽງຈັນ, ວັນທີ: 06 JUN 2012

# ແຈ້ງການ

**ເຖິງ: ຫ້ອງການ ກະຊວງ / ທຽບເທົ່າ, ແຂວງ/ນະຄອນຫຼວງ**
**ເລື່ອງ: ການນຳໃຊ້ຕົວອັກສອນລາວ ເພັດຊະລາດ (Phetsarath OT) ເຂົ້າໃນລະບົບຄອມພິວເຕີ.**

ການນຳໃຊ້ພາສາລາວ ໃນລະບົບຄອມພິວເຕີ ບໍ່ມີຄວາມເປັນເອກະພາບ ແລະ ມີການນຳໃຊ້ແບບ ອັກສອນລາວ (Font) ແຕກຕ່າງກັນ, ອັນເປັນການສ້າງຄວາມຫຍຸ້ງຍາກ ໃນການແລກປ່ຽນຂໍ້ມູນ ແລະ ສື່ສານດ້ວຍກັນ.

ຕໍ່ບັນຫານີ້, ສຳນັກງານນາຍົກລັດຖະມົນຕີ, ໄດ້ອອກແຈ້ງການ ສະບັບເລກທີ: 1071/ຄລບ,ລົງວັນທີ:06.07.2007 ກ່ຽວກັບການຮັບຮອງເອົາ ອັກສອນລາວເພັດສະລາດ (Phetsarath OT) ເປັນມາດຖານທາງການ ເພື່ອການສື່ສານ ແລະ ແລກປ່ຽນຂໍ້ມູນຂ່າວສານ ໃນລະບົບຄອມພິວເຕີ. ຫຼັງຈາກນັ້ນອັກສອນລາວເພັດຊະລາດກໍ່ໄດ້ມີການປັບປຸງ ແລະ ພັດທະນາຂຶ້ນເລື້ອຍໆ ຈົນມີມາດຖານຄົບຖ້ວນ ເພື່ອເອົາເຂົ້າໃນລະບົບຄອມພິວເຕີ ນັບແຕ່ວັນທີ 29 ທັນວາ 2011 ເປັນຕົ້ນມາ.

ສະນັ້ນ ເພື່ອຄວາມເປັນ ເອກະພາບ ແລະ ຄວາມສະດວກໃນການພົວພັນວຽກ, ການສື່ສານ ແລະ ແລກປ່ຽນຂໍ້ມູນຂ່າວສານໃນລະບົບຄອມພິວເຕີ, ທາງກະຊວງ ປທສ ຈຶ່ງຂໍສະເໜີມາຍັງທຸກອົງການພັກ-ລັດ ແລະ ອົງການມະຫາຊົນ ໃຫ້ນຳໃຊ້ ຟອນ ເພັດຊະລາດ (Phetsarath OT) ເປັນ ຟອນມາດຕະຖານທາງການ ໃນຂອບເຂດທົ່ວປະເທດ.

ວິທີການແມ່ນເອົາຂໍ້ມູນຈາກເວັບໄຊ: http://phetsarath.gov.la ພ້ອມກັນນັ້ນ, ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີຄວາມຍິນດີໃຫ້ການແນະນຳເພີ່ມ ຕາມບ່ອນຕິດຕໍ່ດັ່ງລຸ່ມນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກໆພາກສ່ວນຈົ່ງໃຫ້ການຮ່ວມມື ປະຕິບັດແຈ້ງການສະບັບນີ້ ແລະ ແຈ້ງໃຫ້ບັນດາກົມ/ທຽບເທົ່າ, ພະແນກ/ທຽບເທົ່າ, ເມືອງຕ່າງໆ ທີ່ຢູ່ໃນຄວາມຮັບຜິດຊອບຂອງທ່ານ ຕາມທາງຄວນດ້ວຍ.

**ຫົວໜ້າຫ້ອງການ**

ບຸນສະເຫຼີມໄຊ ເຄນນາວົງ

**ຕິດຕໍ່ພົວພັນ:**
**ສູນບໍລິຫານລັດ ດ້ວຍເອເລັກໂຕຼນິກ**
**ໂທ: 021 217706-142**
**Fax: 021 242769**
**Email: egov-rd@mpt.gov.la**